ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 22 ຫາ 26 ກໍລະກົດ 2024




ພິທີເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການສຶກສາ, ສຳຫຼວດ, ອອກແບບໂຄງການ
ສາທິດກະສິກຳ ສີຂຽວ ແລະ ຍືນຍົງຮ່ວມມື ລາວ-ຈີນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ພິທີເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການສຶກສາ, ສຳຫຼວດ, ອອກແບບໂຄງການສາທິດກະສິກຳ ສີຂຽວ ແລະ ຍືນຍົງຮ່ວມມື ລາວ-ຈີນ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ເພື່ອການຮ່ວມມືສະໜັບສະໜູນ, ການຈັດຕັ້ງປະຕິບັດ ວຽກງານການສາທິດ, ການຜະລິດແນວພັນພືດທີ່ດີ, ຊຸກຍູ້, ສົ່ງເສີມ, ແນະນຳ ແລະ ຖ່າຍທອດເຕັກນິກການຜະລິດກະສິກຳແບບໃໝ່ ທີ່ທັນສະໄໝ, ການສະໜອງຂໍ້ມູນຂ່າວສານດ້ານວິຊາການ ເພື່ອປະກອບສ່ວນ ແລະ ຍົກສູງຄຸນນະພາບ ຂອງ ຜະລິດຕະພັນກະສິກຳ ແລະ ພັດທະນາຮູບແບບການຜະລິດກະສິກຳ ໂດຍການປັບປຸງກຳລັງການຜະລິດ ຂອງ ຊາວກະສິກອນ ໃນຂົງເຂດ 10 ແຂວງພາກເໜືອ ຄື: ແຂວງ ອຸດົມໄຊ, ຜົ້ງສາລີ, ບໍ່ແກ້ວ, ຫຼວງນ້ຳທາ, ໄຊຍະບູລີ, ຫຼວງພະບາງ, ຫົວພັນ, ຊຽງຂວາງ, ວຽງຈັນ ແລະ ແຂວງໄຊສົມບູນ. ທ່ານ ສິຣິພົນ ພົທັກສູນ ຫົວໜ້າສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ ໄດ້ກ່າວວ່າ: ຜ່ານການຄົ້ນຄວ້າ ທາງດ້ານວິຊາການ ຂອງ ສູນ ຮ່ວມກັບ ກຸ່ມບໍລິສັດ ໃນໄລຍະຜ່ານມາ ເຫັນວ່າ: ບົ່ນພື້ນຖານທ່າແຮງ ແລະ ຄວາມອາດສາມາດ ຂອງ ທັງສອງຝ່າຍທີ່ມີໃນປັດຈຸບັນ ແລະ ອານາຄົດ, ຈະສາມາດໝູນໃຊ້ທ່າແຮງຂອງຕົນທີ່ມີເຂົ້າໃນການຈັດຕັ້ງປະຕິບັດ ການສຶກສາຄວາມເປັນໄປໄດ້ ແລະ ອອກແບບໂຄງການ ການພັດທະນາສ້າງສູນສາທິດກະສິກຳສີຂຽວ ແລະ ຍືນຍົງ ລາວ-ຈີນ ເພື່ອແນໃສ່ ທັນລະບົບບໍລິການກະສິກຳ ໃຫ້ເປັນຕົວແບບ ການພັດທະນາກະສິກຳສີຂຽວ ແລະ ຍືນຍົງ, ເປັນສະຖານທີ່ ໃນການຄົ້ນຄວ້າ, ທົດສອບ, ວິໄຈ ແລະ ແລກປ່ຽນຄວາມຮູ້, ຖ່າຍທອດເຕັກນິກວິຊາການ ກະສິກຳ ທີ່ທັນສະໄໝ, ພ້ອມທັງສະໜອງແນວພັນພືດທີ່ດີ, ມີປະສິດທິພາບສູງ ໃຫ້ແກ່ ພໍ່ແມ່ປະຊາຊົນ, ກຸ່ມຊາວກະສິກອນ ແລະ ຜູ້ປະກອບການ ແລະ ເປັນສູນວິໄຈ SPS ທີ່ສາມາດເຊື່ອມໂຍງ ແລະ ຖືກຮອງຮັບ ຈາກ ສປ ຈີນ ຮັບປະກັນ ການຢັ້ງຢືນຄຸນນະພາບ ຂອງ ຜະລິດຕະພັນກະສິກຳ ທີ່




ສົ່ງອອກ ແລະ ນຳເຂົ້າ ໃນອານາຄົດອັນໃກ້.

ໃນວັນທີ 12 ກໍລະກົດ 2024 ທີ່ສູນສາທິດ ແລະ ບໍລິການເຕັກນິກຮ່ວມມືລາວ-ຈີນ ແຂວງອຸດົມໄຊ ຈຶ່ງໄດ້ມີພິທີເຊັນບົດບັນທຶກຄວາມເຂົ້າໃຈກ່ຽວກັບ ການສຶກສາ, ສຳຫຼວດ, ອອກແບບໂຄງການສາທິດກະສິກຳສີຂຽວ ແລະ ຍືນຍົງຮ່ວມມືລາວ-ຈີນ ລະຫວ່າງ ສູນສາທິດ ແລະ ບໍລິການເຕັກນິກກະສິກຳຮ່ວມມື ລາວ-ຈີນ ກັບ ບໍລິສັດກຸ່ມພັດທະນາການກະເສດວຽງຈັນຈຳກັດ ໂດຍການລົງນາມໃນບົດບັນທຶກຄັ້ງນີ້ຂອງ ທ່ານ ສີລິພົນ ພິທັກສູນ ຫົວໜ້າສູນສາທິດ ແລະ ບໍລິການເຕັກນິກກະສິກຳຮ່ວມມືລາວ-ຈີນ, ທ່ານ ຢາງ ຊີ (yang xi) ຜູ້ຈັດການບໍລິສັດກຸ່ມພັດທະນາການກະເສດວຽງຈັນຈຳກັດ ແລະ ທ່ານ ປອ. ພົນມີ ອິນທິຈັກ ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ເປັນກຽດເຂົ້າຮ່ວມເປັນສັກຂີພະຍານໃນຄັ້ງນີ້ ໂດຍທ່ານ ນາງ ສຸດາຄຳ ພົມມະສອນ, ຮອງຫົວໜ້າຫ້ອງການກະຊວງກະສິກຳ ແລະ ປ່າໄມ້, ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງອຸດົມໄຊ ພ້ອມດ້ວຍພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມ.

ທ່ານ ຢາງ ຊີ ຜູ້ອຳນວຍການບໍລິສັດກຸ່ມພັດທະນາການກະເສດວຽງຈັນຈຳກັດຜູ້ດຽວໄດ້ກ່າວຕື່ມວ່າ ການເຊັນບົດບັນທຶກຄວາມເຂົ້າໃຈຄັ້ງນີ້ແມ່ນມີຄວາມໝາຍຄວາມສຳຄັນຕໍ່ການເພີ່ມທະວີການຮ່ວມມືລະຫວ່າງທາງສອງຝ່າຍໃຫ້ແໜ້ນແຟ້ນຍິ່ງຂຶ້ນ ເພື່ອຊຸກຍູ້ການຮ່ວມມືໃຫ້ໄດ້ຮັບການປະຕິບັດຕົວຈິງຢ່າງສຳເລັດຜົນ ເຊິ່ງພາຍໃຕ້ການຊີ້ນຳ-ນຳພາ ຂອງກະຊວງກະສິກຳ ແລະ ປ່າໄມ້, ທາງບໍລິສັດຈະພະຍາຍາມປະສານສົມທົບກັບສູນສາທິດ ແລະ ບໍລິການເຕັກໂນໂລຊີກະສິກຳລາວ-ຈີນ ເພື່ອດຳເນີນວຽກງານສຶກສາ, ສຳຫຼວດ ແລະ ອອກແບບ ໂຄງການສາທິດກະສິກຳສີຂຽວ ແລະ ຍືນຍົງ ຮ່ວມມື ລາວ-ຈີນ ໃຫ້ໄດ້ຮັບຜົນເປັນຈິງ ຕາມເປົ້າໝາຍ ປະກອບສ່ວນເຂົ້າໃນພັດທະນາເສດ ຖະກິດ-ສັງຄົມ ແລະ ຊຸກຍູ້ພັດທະນາກະສິກຳລາວໃຫ້ມີຄວາມຍືນຍົງ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;